ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 07 ຫາ 11 ເມສາ 2025




ຮອງນາຍົກລັດຖະມົນຕີ ຊີ້ນຳວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ຮອງນາຍົກລັດຖະມົນຕີ ຊີ້ນຳວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

ພາບ-ຂ່າວໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ໃນຕອນບ່າຍວັນທີ 31 ມີນາ 2025 ຢູ່ທີ່ສະໂມສອນກະຊວງກະສິກຳ ແລະ ປ່າໄມ້ ທ່ານ ພົອ ຈັນສະໝອນ ຈັນຍາລາດ ຮອງນາຍົກລັດຖະມົນຕີແຫ່ງ ສປປ.ລາວ ໄດ້ພົບປະໂອ້ລົມຊີ້ນຳວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ. ເຂົ້າຮ່ວມມີ ທ່ານ ປອ. ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ມີຜູ້ຕາງໜ້າຈາກຄະນະຈັດຕັ້ງສູນກາງພັກ, ບັນດາ ທ່ານຮອງລັດຖະມົນຕີ, ຫົວໜ້າຫ້ອງການ, ຫົວໜ້າ-ຮອງຫົວໜ້າກົມ, ສູນ, ຕາງໜ້າ 3 ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍຫົວໜ້າພະແນກອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ເຂົ້າຮ່ວມທັງໝົດ 224 ຄົນ, ຍິງ 68 ຄົນ.

ໂອກາດນີ້, ທ່ານ ປອ. ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ລາຍງານກ່ຽວກັບ ສະພາບການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາ ໂດຍສະເພາະແມ່ນພາລະບົດບາດ, ດ້ານແຜນຍຸດທະສາດ ແລະ ວິໄສທັດ ແຕ່ນີ້ຮອດປີ 2030 "ຮັບປະກັນ ດ້ານສະບຽງອາຫານ ແລະ ໂພຊະນາການທີ່ດີ; ການຜະລິດສິນຄ້າກະສິກຳຂະຫຍາຍຕົວ, ທັນສະໄໝ, ຫຼາກຫຼາຍ, ປອດໄພ; ລະບົບນິເວດກະສິກຳ ຂອງປະເທດ ມີຄວາມຊຽວງາມ ແລະ ປະຊາຊົນ ມີລາຍຮັບທີ່ຍືນຍົງ" ໂດຍອີງໃສ່ 3 ເສົາຄ້ຳຄື: ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ໄດ້ກຳນົດເອົາ 4 ແຜນງານໃຫຍ່ ແລະ ໃນປີ 2024 ປະຕິບັດໄດຄື: ແຜນງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ສາມາດຜະລິດສະບຽງອາຫານ ໄດ້ 6.13 ລ້ານໂຕນ ເທົ່າກັບ 91% ຂອງແຜນການ ປະກອບມີ: ເຂົ້າ, ພືດສະບຽງອາຫານ, ການຜະລິດຊີ້ນ, ປາ ແລະ ໄຂ່; ແຜນງານຜະລິດກະສິກຳເປັນສິນຄ້າ ການປູກຝັງ: ປະຕິບັດໄດ້ 11 ລ້ານກວ່າໂຕນ ເພີ່ມຂຶ້ນ 13.8%,




ການລ້ຽງສັດ ແລະ ການປະມົງ: ມີຟາມລ້ຽງປາກະຊັງ 146 ແຫ່ງ, ມີ 7,700 ກວ່າ ກະຊັງ ແລະ ມີຟາມລ້ຽງສັດ 2,200 ກວ່າຟາມ, ການສົ່ງອອກສິນຄ້າກະສິກຳ ແລະ ປ່າໄມ້: ບັນລຸ 1,495 ລ້ານກວ່າໂດລາສະຫະລັດ ລື່ນແຜນການ 24.6%; ແຜນງານຄຸ້ມຄອງປົກປັກຮັກສາປ່າໄມ້ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຄຳສັ່ງ ສະບັບເລກທີ 11/ນຍ, ລົງວັນທີ 21 ກໍລະກົດ 2023 ເຮັດໃຫ້ເນື້ອທີ່ໄຟໄໝ້ປ່າຫຼຸດລົງ ແລະ ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄດ້ສ້າງຄອບຄົວພົ້ນທຸກໄດ້ 31,232 ຄອບຄົວ ກວມ 89%; ສ້າງບ້ານພົ້ນທຸກໄດ້ 271 ບ້ານ ເທົ່າກັບ 54%; ສ້າງເມືອງພົ້ນທຸກໄດ້ 8 ເມືອງ ເທົ່າກັບ 53% ຂອງແຜນການ. ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ທ່ານ ພົວ ຈັນສະໝອນ ຈັນຍາລາດ ຮອງນາຍົກລັດຖະມົນຕີ ແຫ່ງ ສປປ.ລາວ ໄດ້ໃຫ້ທິດໂອ້ລົມຕໍ່ການນຳກະຊວງຫຼາຍໜ້າວຽກຄື: ວຽກທີ ໜຶ່ງ: ເພີ່ມທະວີການຈັດຕັ້ງປະຕິບັດ ແຜນການໃນປີ 2025 ໂດຍສະເພາະແມ່ນສຸມໃສ່ປະຕິບັດ ບັນດາຄາດໝາຍ ທີ່ຕິດພັນກັບການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2025; ຄາດໝາຍ ທີ່ຕິດພັນກັບວາລະແຫ່ງຊາດ; ແລະ ການຈັດຕັ້ງຜັນຂະຫຍາຍບັນດາໜ້າວຽກ ໃນການປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ປະກົດຜົນເປັນຈິງ; ວຽກທີ ສອງ: ອີງໃສ່ຄວາມຈຳເປັນພາວະວິໄສ ໃນການປັບປຸງກົງຈັກການຈັດຕັ້ງໃຫ້ໄປຕາມທິດ "ກະທັດຮັດ, ສົມເຫດສົມຜົນ, ແລະ ມີປະສິດທິພາບ" ໃນນີ້, ໜຶ່ງໃນເປົ້າໝາຍການປັບປຸງແມ່ນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະໄດ້ໂຮມເຂົ້າກັບກະຊວງ ກະສິກຳ ແລະ ປ່າໄມ້ ໂດຍອີງຕາມ ມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບ ເລກທີ 03/ຄບສພ, ລົງວັນທີ 12 ມີນາ 2025 ປີ 2025 ວ່າດ້ວຍ ການປັບປຸງກົງຈັດການຈັດຕັ້ງ.

ສະນັ້ນ, ສະເໜີຄະນະພັກ, ຄະນະນຳແຕ່ລະຂັ້ນ ໂດຍສະເພາະແມ່ນຄະນະພັກ, ຄະນະນຳກະຊວງ ທີ່ຖືກປັບປຸງ ຕ້ອງເພີ່ມຄວາມເອົາໃຈໃສ່ພ້ອມທັງຮັບຜິດຊອບໃນການສຶກສາອົບຮົມການເມືອງ-ແນວຄິດ ຂອງສະມາຊິກພັກ, ພະນັກງານລັດຖະກອນ ໃຫ້ມີຄວາມຮູ້ຄວາມເຂົ້າໃຈ ຢ່າງເລິກເຊິ່ງ ຕໍ່ການປັບປຸງກົງຈັກການຈັດຕັ້ງ; ເພີ່ມທະວີຄວາມຮັບຜິດຊອບໃນການຊຸກຍູ້, ຕິດຕາມໃນການປັບປຸງກົງຈັກການຈັດຕັ້ງ ໃຫ້ໄປຕາມທິດກົງຈັກກະທັດຮັດ, ໜັກແໜ້ນ, ເຂັ້ມແຂງ ແລະ ເຄື່ອນໄຫວໃຫ້ມີປະສິດທິພາບ ບົນພື້ນຖານການສ້າງຍຸດທະສາດການປັບປຸງກົງຈັກ, ພ້ອມທັງ ກຳນົດຕຳແໜ່ງງານໃຫ້ເໝາະສົມກັບວິຊາສະເພາະທີ່ຕ້ອງການ, ສອດຄ່ອງກັບໜ້າວຽກຕົວຈິງຜ່ານການຈັດຕັ້ງປະຕິບັດເຮັດໃຫ້ກົງຈັກກະທັດຮັດມີທ່າອ່ຽງຫລຸດລົງ, ພາລະບົດບາດ, ໜ້າທີ່ຈະແຈ້ງ, ຮັດກຸມ, ກົນໄກການປະສານງານຄ່ອງຕົວ, ສອດຄ່ອງກັບສະພາບ, ຈຸດພິເສດຂອງແຕ່ລະຂະແໜງການ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;